# ຢາວັກຊິນ
# ຫຼອດລົມອັກເສບ

## ນິຍາມ:

ວັກຊິນຊະນິດນີ້ ປຸງແຕ່ງມາຈາກເຊື້ອໄວຣັສ ຫຼອດລົມອັກເສບ, ປູກໃສ່ໄຂ່ລູກ ອາຍຸ 8 — 6 ມື້. ຫລັງຈາກນັ້ນ ເກັບເອົານ້ຳຫລໍ່ລ້ຽງໃນໄຂ່ນັ້ນ ມາປຸງແຕ່ງເປັນວັກຊິນ ບັນຈຸເຂົ້າແກ້ວແລ້ວເອົາເຂົ້າຈັກດູດແຫ້ງດ້ວຍຄວາມເຢັນ ໃນລະບົບສູນອາກາດເປັນວັກຊິນເຊື້ອເປັນຊະນິດຝຸ່ນ.




## ລັກສະນະອາການ

ພະນາດນີ້ມັກຕິດໄກ່ນ້ອຍຫລາຍກ່ວາໄກ່ໃຫຍ່ ມີອາການໄອ, ຈາມເລື້ອຍໆ ຢືນຈຸ້ມກັນເປັນໝູ່ ຫົວຊຸ້ນເຂົ້າປີກ ກິນອາຫານຫລຸດຜ່ອນລົງ, ເມື່ອຍ ອ້າປາກຍ້ອນຫາຍໃຈຍາກ.

## ຂໍ້ແນະນຳ:

ໃຊ້ປ້ອງກັນພະຍາດ ຫຼອດລົມອັກເສບ, ຢອດໄກ່ທົ່ວໄປ. ອາຍຸ2 ອາທິດ ຫ້າມໃຊ້ກັບໄກ່ພັນໄຂ່ທີ່ກຳລັງໄຂ່. ຫ້າມໃຊ້ກັບຝຸງໄກ່ທີ່ກຳລັງເປັນພະຍາດທາງລະບົບຫາຍໃຈ.



## ວິທີໃຊ້:

- ແກ້ວ 50 ເຂັມ ປະສົມນ້ຳກັ່ນ 50 ມລ. ສັ່ນໃຫ້ລະລາຍກ່ອນໃຊ້.









ຢອດດັງ ແລະ ຕາເບື້ອງລະຢອດ

- ຢອດດັງ ແລະ ຕາເບື້ອງລະຢອດ ( 2 — 4 ຢອດ ) ເວລາຢອດຕ້ອງອັດດັງ ແລະ ປາກຂອງໄກ່ເບື້ອງໜຶ່ງນັ້ນໄວ້ເພື່ອໃຫ້ຢາເຂົ້າໄປໃນດັງນັ້ນໝົດ.
- ຫລັງຈາກປະສົມນ້ຳຢານັ້ນແລ້ວຄວນໃຊ້ໃຫ້ໝົດ ພາຍໃນ 1 ຊົ່ວໂມງ.
- ບໍ່ຄວນໃຊ້ເຫລົ້າ ຫລື ຢາ ຂ້າເຊື້ອອື່ນໆ ເຊັດຕາມບໍລິເວນຢອດຢາ, ກ່ອນ ຫລື ຫລັງຢອດ.

## ໄລຍະຄຸ້ມກັນ:

ສັດຈະຄຸ້ມກັນພະຍາດ ຫຼອດລົມອັກເສບໄດ້ 6 ເດືອນ.

## ການເກັບຮັກສາ:

- ຮັກສາໃນອຸນນະພູມ 4 ອົງສາ ກຸ້ມໄດ້ 3 ເດືອນ, ໃນອຸນນະພູມ ( — 30 ອົງສາ ກຸ້ມໄດ້ 1 ປີ )
- ເວລາຂົນຍ້າຍວັກຊິນ ຄວນຮັກສາໃຫ້ຢູ່ໃນຄວາມເຢັນ ແລະ ບໍ່ໃຫ້ຖືກແສງແດດ.

**ແກ້ວບັນຈຸ:** ແກ້ວໜຶ່ງບັນຈຸ 50 ເຂັມ.

**ຕາຕະລາງ : ການນຳໃຊ້ ຢາວັກຊີນຫຼອດລົມອັກເສບ**

| ຊະນິດຢາວັກຊີ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| • ຢາວັກຊີນຫຼອດລົມອັກເສບ. | • ໃຊ້ກັບໄກ່ 2 ອາທິດ ຫາ 1 ເດືອນ. | • ແກ້ວ 50 ເຂັມປະສົມນ້ຳ 50 ມລ. (ຢອດດັງ, ຕາ 2 — 4 ຢອດ) | 6 ເດືອນ |


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**



ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ


# ຢາວັກຊິນ

# ຫຼອດລົມອັກເສບ





ຄັດຈາກ: ປື້ມຄູ່ມືການນຳໃຊ້ວັກຊີນສຳລັບສັດ (1997)

ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (*CETDU*)

ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (*LEAP*)